ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ 06 ສປປ

ນະຄອນຫຼວງວຽງຈັນ, ວັນທີ 16.01.2007.

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ

ຄ່າທຳນຽມສານ ສະບັບປັບປຸງ.

~~~~~~~~~~~~~~~~

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍ ທີ່ສະພາແຫ່ງຊາດໄດ້ຕົກລົງ ຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 07/ສພຊ, ລົງວັນທີ 27 ທັນວາ 2006 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ຄ່າທຳນຽມສານ ສະບັບປັບປຸງ ;
- ອີງຕາມໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 06/ຄປຈ, ລົງວັນທີ 10 ມັງກອນ 2007.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :*

*ມາດຕາ 1* : ປະກາດໃຊ້ກົດໝາຍວ່າດ້ວຍ ຄ່າທຳນຽມສານ ສະບັບປັບປຸງ .

*ມາດຕາ 2* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປລາວ.

ຈູມມາລີ ໄຊຍະສອນ
~~~~~~~~~~~~~~~~

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ** ເລກທີ 07 /ສພຊ

# ມະຕິຕົກລົງ
## ຂອງ
## ສະພາແຫ່ງຊາດ ແຫ່ງ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ
## ຄ່າທຳນຽມສານ ສະບັບປັບປຸງ

---

- ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ VI ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ຄ່າທຳນຽມສານ ສະບັບປັບປຸງ ໃນວາລະປະຊຸມຕອນເຊົ້າຂອງວັນທີ 27 ທັນວາ 2006;

## ກອງປະຊຸມໄດ້ຕົກລົງ:

ມາດຕາ 1. ຮັບຮອງເອົາກົດໝາຍວ່າດ້ວຍ ຄ່າທຳນຽມສານ ສະບັບປັບປຸງ ດ້ວຍຄະແນນສຽງເຫັນດີເປັນເອກະສັນ.

ມາດຕາ 2. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 27 ທັນວາ 2006
ປະທານສະພາແຫ່ງຊາດ

ສະພາແຫ່ງຊາດ
ປະທານ

ທອງສິງ ທຳມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 07 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 27 ທັນວາ 2006

# ກົດໝາຍ
# ວ່າດ້ວຍຄ່າທຳນຽມສານ
## (ສະບັບປັບປຸງ)

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1(ໃໝ່). ຈຸດປະສົງ**

ກົດໝາຍວ່າດ້ວຍຄ່າທຳນຽມສານ ກຳນົດຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບການເກັບ, ການຄຸ້ມຄອງ, ການຮັບ, ການຈ່າຍຄ່າທຳນຽມສານ ເພື່ອຮັບປະກັນໃຫ້ການເກັບຄ່າທຳນຽມສານມີຄວາມເປັນເອກະພາບກັນໃນທົ່ວປະເທດ, ສ້າງເງື່ອນໄຂສະດວກແກ່ເຈົ້າໜ້າທີ່ສືບສວນ-ສອບສວນ, ໄອຍະການປະຊາຊົນ, ສານປະຊາຊົນ, ພະນັກງານປະຕິບັດຄຳຕັດສິນຂອງສານ ໃນການເຄື່ອນໄຫວວຽກງານໄດ້ວ່ອງໄວ ແລະ ມີຄວາມຍຸຕິທຳ ທັງປະກອບສ່ວນສ້າງລາຍຮັບໃຫ້ແກ່ງົບປະມານແຫ່ງລັດ.

**ມາດຕາ 2(ໃໝ່). ຄ່າທຳນຽມສານ**

ຄ່າທຳນຽມສານ ແມ່ນຄ່າທຳນຽມທີ່ຄູ່ຄວາມ ຫຼື ບຸກຄົນທີສາມຕ້ອງໄດ້ຈ່າຍເຂົ້າໃນການດຳເນີນຄະດີ ຊຶ່ງປະກອບດ້ວຍ ອາກອນຂອງລັດ, ຄ່າໃຊ້ຈ່າຍໃນການດຳເນີນຄະດີ, ຄ່າໃຊ້ຈ່າຍໃຫ້ແກ່ຜູ້ຖືກເຊີນເຂົ້າຮ່ວມໃນການດຳເນີນຄະດີ, ຄ່າເອກະສານ ແລະ ຄ່າສຳເນົາເອກະສານຕ່າງໆ.

**ມາດຕາ 3(ໃໝ່). ນະໂຍບາຍຂອງລັດຕໍ່ຄ່າທຳນຽມສານ**

ລັດວາງນະໂຍບາຍກ່ຽວກັບການເກັບຄ່າທຳນຽມສານຄືກັນກັບການເກັບຄ່າທຳນຽມ ແລະຄ່າບໍລິການອື່ນໆ ໃຫ້ຄົບຖ້ວນ, ທັນເວລາ ພ້ອມທັງຊຸກຍູ້ໃຫ້ຄູ່ຄວາມໃນຄະດີທີ່ກ່ຽວຂ້ອງປະຕິບັດພັນທະ ຫຼື ຄວາມຮັບຜິດຊອບຂອງຕົນໃນການເສຍຄ່າທຳນຽມສານ.

**ມາດຕາ 4(ໃໝ່). ຫຼັກການຂອງຄ່າທຳນຽມສານທາງແພ່ງ**

ການດຳເນີນຄະດີແພ່ງ ມີຈຸດປະສົງແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ຄວາມ ຈຶ່ງກຳນົດໃຫ້ມີການເສຍຄ່າທຳນຽມສານທາງແພ່ງ.

ການຮ້ອງຟ້ອງທາງແພ່ງທີ່ຍົກເວັ້ນຈາກຄ່າທຳນຽມສານທາງແພ່ງຄື: ອາກອນຂອງລັດ, ຄ່າຂໍອຸທອນ, ຄ່າຂໍລົບລ້າງ ແລະ ຄ່າຂໍຮື້ຟື້ນຄະດີ ມີດັ່ງນີ້:

1. ການຮ້ອງຟ້ອງເອົາຄ່າແຮງງານ ຫຼື ການຮ້ອງຂໍອື່ນໆທີ່ເນື່ອງມາຈາກສາຍພົວພັນແຮງງານ;
2. ການຮ້ອງຟ້ອງເອົາຄ່າລ້ຽງດູ;
3. ການຮ້ອງຟ້ອງເອົາການໃຊ້ແທນຄ່າເສັຍຫາຍທີ່ເນື່ອງມາຈາກການເສັຍອົງຄະ ຫຼື ສຸຂະພາບ ຫຼື ການເສັຍຊີວິດ;
4. ການຮ້ອງຟ້ອງເອົາການໃຊ້ແທນຄ່າເສັຍຫາຍທີ່ເນື່ອງມາຈາກການກະທຳຜິດທາງອາຍາ;
5. ການຮ້ອງຟ້ອງເອົາເງິນອຸດໜູນ ຫຼື ເງິນບຳນານທີ່ຈ່າຍບໍ່ຖືກຕ້ອງນັ້ນຄືນ;
6. ການຮ້ອງຟ້ອງຂອງອົງການໄອຍະການປະຊາຊົນ, ອົງການບໍລິຫານລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມເພື່ອປົກປ້ອງສິດ ແລະຜົນປະໂຫຍດອັນຊອບທຳຂອງບຸກຄົນອື່ນ;
7. ການຮ້ອງຟ້ອງຂອງອົງການການເງິນຂອງລັດ;
8. ການຮ້ອງຟ້ອງຂອງອົງການບໍລິຫານລັດ, ພະນັກງານ ຫຼື ບຸກຄົນ ທີ່ເນື່ອງມາຈາກສາຍພົວພັນທາງດ້ານບໍລິຫານ.

ການຍົກເວັ້ນດັ່ງກ່າວແມ່ນໃຫ້ປະຕິບັດຕໍ່ຜູ້ຮ້ອງຟ້ອງທີ່ເສັຍຄະດີເທົ່ານັ້ນ.

ສຳລັບຜູ້ຖືກຮ້ອງຟ້ອງທີ່ເສັຍຄະດີນັ້ນ ຈະບໍ່ໄດ້ຮັບການຍົກເວັ້ນ.

**ມາກຕາ 5(ໃໝ່). ຫຼັກການຂອງຄ່າທຳນຽມສານທາງອາຍາ**

ການດຳເນີນຄະດີອາຍາ ມີຈຸດປະສົງແນໃສ່ປົກປ້ອງຜົນປະໂຫຍດຂອງລັດ, ຂອງສັງຄົມ, ສິດຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ລັດຈຶ່ງຕ້ອງເປັນຜູ້ຮັບຜິດຊອບຕໍ່ຄ່າໃຊ້ຈ່າຍຕ່າງໆ ໃນການດຳເນີນຄະດີອາຍານັ້ນກ່ອນ; ເມື່ອສານຫາກຕັດສິນໃຫ້ຈຳເລີຍເປັນຜູ້ກະທຳຜິດແລ້ວ ຈຳເລີຍຕ້ອງຮັບຜິດຊອບໃຊ້ແທນຄ່າໃຊ້ຈ່າຍຕ່າງໆທັງໝົດຄືນໃຫ້ແກ່ລັດ.

ໃນກໍລະນີທີ່ມີການຕັດສິນໃຫ້ ຈຳເລີຍ ພົ້ນຈາກຂໍ້ກ່າວຫາ ຫຼື ຕັດສິນລົງໂທດຜູ້ກະທຳຜິດຊຶ່ງຢູ່ໃນສະພາບທີ່ບໍ່ສາມາດຈະຈ່າຍຄ່າທຳນຽມສານໄດ້ນັ້ນ ແມ່ນໃຫ້ລັດເປັນຜູ້ຮັບຜິດຊອບ.

**ມາກຕາ 6(ໃໝ່). ການເສັຍຄ່າທຳນຽມສານ**

ການເສັຍຄ່າທຳນຽມສານໃຫ້ປະຕິບັດດັ່ງນີ້:

1. ຄ່າທຳນຽມສານ ໃຫ້ເສັຍເປັນເງິນກີບ;
2. ຄ່າໃຊ້ຈ່າຍໃນການດຳເນີນຄະດີ, ຄ່າເອກະສານ, ຄ່າສຳເນົາເອກະສານ ແລະ ຄ່າໃຊ້ຈ່າຍສຳລັບຜູ້ຖືກເຊີນເຂົ້າຮ່ວມໃນການດຳເນີນຄະດີ ໃຫ້ເສັຍໃນເວລາດຳເນີນຄະດີ;
3. ອາກອນຂອງລັດ ໃຫ້ເສັຍໃນເວລາຈັດຕັ້ງປະຕິບັດຄຳຕັດສິນຂອງສານ;

4. ການຮັບ ແລະ ການຈ່າຍຄ່າທຳນຽມສານ ໃຫ້ເຮັດເປັນລາຍລັກອັກສອນ.

**ມາດຕາ 7(ໃໝ່). ພັນທະຕໍ່ຄ່າທຳນຽມສານ**

ໂຈດ, ຈຳເລີຍ ແລະ ບຸກຄົນທີສາມ ທີ່ກ່ຽວຂ້ອງໃນຄະດີຕ້ອງເສຍຄ່າທຳນຽມສານ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະທັນກຳນົດເວລາ ເພື່ອອຳນວຍຄວາມສະດວກໃຫ້ແກ່ເຈົ້າໜ້າທີ່ສືບສວນ-ສອບສວນ, ໄອຍະການປະຊາຊົນ, ສານປະຊາຊົນ, ພະນັກງານປະຕິບັດຄຳຕັດສິນຂອງສານໃນການດຳເນີນຄະດີ ແລະການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຢ່າງມີປະສິດທິຜົນ ແລະປະກອບສ່ວນສ້າງລາຍຮັບໃຫ້ແກ່ງົບປະມານແຫ່ງລັດ.

ພະນັກງານທີ່ເກັບຄ່າທຳນຽມສານ ປະຕິບັດໜ້າທີ່, ຄວາມຮັບຜິດຊອບ ແລະ ພັນທະ ຂອງຕົນ ຕາມລະບຽບກົດໝາຍດ້ວຍຄວາມຊື່ສັດ ແລະໂປ່ງໃສ.

## ໝວດທີ II
## ຄ່າທຳນຽມສານ

**ມາດຕາ 8(ໃໝ່). ອົງປະກອບຄ່າທຳນຽມສານ**

ຄ່າທຳນຽມສານປະກອບດ້ວຍ:

1. ອາກອນຂອງລັດ;
2. ຄ່າໃຊ້ຈ່າຍໃນການດຳເນີນຄະດີ;
3. ຄ່າໃຊ້ຈ່າຍໃຫ້ແກ່ຜູ້ຖືກເຊີນເຂົ້າຮ່ວມໃນການດຳເນີນຄະດີ;
4. ຄ່າເອກະສານ ແລະ ຄ່າສຳເນົາເອກະສານຕ່າງໆ.

**ມາດຕາ 9(ໃໝ່). ອາກອນຂອງລັດ**

ອາກອນຂອງລັດ ແມ່ນພາກສ່ວນໜຶ່ງຂອງຄ່າທຳນຽມສານ ຊຶ່ງຄູ່ຄວາມຜູ້ເສຍຄະດີ ຕ້ອງຈ່າຍ ຕາມຄຳຕັດສິນຂອງສານ. ອາກອນຂອງລັດທີ່ເກັບໄດ້ນັ້ນ ໃຫ້ຖອກເຂົ້າງົບປະມານແຫ່ງລັດ.

ອາກອນຂອງລັດປະກອບດ້ວຍ:

1. ອາກອນຂອງລັດຕາມມູນຄ່າຂອງຊັບທີ່ສານຕັດສິນໃຫ້;
2. ຄ່າຂໍອຸທອນ, ຄ່າຂໍລົບລ້າງ ແລະ ຄ່າຂໍຮື້ຟື້ນຄະດີ.

ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ ຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ກ່ອນຈະນຳໄປຈັດຕັ້ງປະຕິບັດ ຕ້ອງໃຫ້ເສຍອາກອນຂອງລັດເສຍກ່ອນ.

**ມາດຕາ 10(ໃໝ່). ຄ່າໃຊ້ຈ່າຍໃນການດຳເນີນຄະດີ**

ຄ່າໃຊ້ຈ່າຍໃນການດຳເນີນຄະດີ ແມ່ນຄ່າໃຊ້ຈ່າຍ ເພື່ອທຳການພິສູດຫຼັກຖານ, ຊັນນະສູດສະຖານທີ່, ຮັກສາຂອງກາງ ລວມທັງ ຄ່າເດີນທາງ, ຄ່າກິນຢູ່ ແລະ ອື່ນໆ.

ມາດຕາ 11(ໃໝ່). ຄ່າໃຊ້ຈ່າຍສຳລັບຜູ້ຖືກເຊີນເຂົ້າຮ່ວມໃນການດຳເນີຄະດີ

ພະຍານ, ຜູ້ຊ່ຽວຊານ, ຜູ້ແປພາສາ ທີ່ຖືກເຊີນເຂົ້າມາສານ ແລະພະນັກງານທີ່ລົງເຮັດວຽກນັ້ນ ຈະໄດ້ຮັບຄ່າທົດແທນຈຳນວນເງິນ ທີ່ພວກກ່ຽວໄດ້ໃຊ້ຈ່າຍເປັນຄ່າເດີນທາງ, ຄ່າພັກເຊົາ ແລະ ຄ່າຢູ່ກິນປະຈຳວັນ.

ຜູ້ຊ່ຽວຊານ, ຜູ້ແປພາສາ, ຜູ້ສິ່ງເອກະສານ ແລະຜູ້ຮັກສາຂອງກາງ ຈະໄດ້ຮັບຄ່າແຮງງານໃນເວລາປະຕິບັດວຽກງານ ຕາມການມອບໝາຍຂອງສານຕາມລະບຽບການສະເພາະ.

ນອກຈາກ ຈະໄດ້ຮັບຄ່າເດີນທາງ, ຄ່າພັກເຊົາ ແລະ ຄ່າຢູ່ກິນປະຈຳວັນແລ້ວ ກຳມະກອນ, ລັດຖະກອນ ທີ່ຖືກເຊີນເຂົ້າມາສານໃນຖານະເປັນພະຍານນັ້ນ ຍັງຕ້ອງໃຫ້ຮັກສາເງິນເດືອນເດີມຂອງຜູ້ກ່ຽວໄວ້, ສ່ວນພະຍານທີ່ບໍ່ແມ່ນກຳມະກອນ, ລັດຖະກອນ ຊຶ່ງຖືກເຊີນເຂົ້າມາສານ ໂດຍປະວຽກງານປະຈຳວັນນັ້ນ ຜູ້ກ່ຽວກໍຈະໄດ້ຮັບຄ່າຕອບແທນຄືນ.

ມາດຕາ 12(ໃໝ່). ຄ່າເອກະສານ ແລະ ຄ່າສຳເນົາເອກະສານຕ່າງໆ

ຄ່າເອກະສານ ແລະ ຄ່າສຳເນົາເອກະສານຕ່າງໆປະກອບດ້ວຍ:

1. ຄ່າເສື້ອປົກສຳນວນຄະດີ;
2. ຄ່າທຳນຽມ ເອກະສານເຊັ່ນ: ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ;
3. ຄ່າສຳເນົາເອກະສານຕ່າງໆ.

ມາດຕາ 13(ໃໝ່). ການມອບ ແລະ ການຮັບເງິນຄ່າທຳນຽມສານ

ການມອບ ແລະ ການຮັບເງິນຄ່າທຳນຽມສານ ແມ່ນໃຫ້ຈ່າສານ ອອກໃບຮັບເງິນຢ່າງຖືກຕ້ອງຕາມຈຳນວນເງິນ ທີ່ໄດ້ມອບຮັບຕົວຈິງໂດຍມີລາຍເຊັນ ຫຼື ຈ້ຳໂປ້ມື ຂອງຜູ້ມອບ ແລະ ຜູ້ຮັບ.

ການອອກໃບຮັບເງິນຕ້ອງເຮັດເປັນສາມສະບັບຄື ໜຶ່ງສະບັບ ມອບໃຫ້ຜູ້ມອບເງິນ, ໜຶ່ງສະບັບເອົາໄວ້ໃນສຳນວນຄະດີ ແລະ ອີກໜຶ່ງສະບັບ ເອົາໄວ້ໃນທົ່ວຂວັ້ນ.

ມາດຕາ 14(ໃໝ່). ການນຳໃຊ້ເງິນຄ່າທຳນຽມສານ

ເງິນຄ່າທຳນຽມສານ ຈະຖືກນຳໃຊ້ເຂົ້າໃນການດຳເນີນຄະດີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ແລະ 11 ຂອງກົດໝາຍສະບັບນີ້.

ມາດຕາ 15(ໃໝ່). ການສະຫຼຸບເງິນຄ່າທຳນຽມສານ

ການໃຊ້ຈ່າຍເງິນຄ່າທຳນຽມສານ ເຂົ້າໃນການດຳເນີນຄະດີ ຕ້ອງໃຫ້ສະຫຼຸບຢ່າງລະອຽດ ຈະແຈ້ງ ເປັນລາຍລັກອັກສອນ ແລ້ວເກັບໄວ້ໃນສຳນວນຄະດີ ເພື່ອໃຫ້ສານພິຈາລະນາວິນິດໄສລົງໃສ່ ຄຳຕັດສິນ ຫຼື ຄຳພິພາກສາ.

## ໝວດທີ III
## ຄ່າທຳນຽມສານທາງແພ່ງ

**ມາດຕາ 16(ໃໝ່). ຄ່າທຳນຽມສານທາງແພ່ງ**

ຄ່າທຳນຽມສານທາງແພ່ງ ແມ່ນຄ່າໃຊ້ຈ່າຍຂອງຄູ່ຄວາມ ຫຼື ບຸກຄົນທີສາມເຂົ້າໃນການດຳເນີນຄະດີແພ່ງ, ການຄ້າ, ຄອບຄົວ, ເດັກ ແລະຄະດີອື່ນໆ ຕາມທີ່ກົດໝາຍໄດ້ກຳນົດໄວ້ ລວມທັງອາກອນຂອງລັດ, ຄ່າໃຊ້ຈ່າຍໃຫ້ແກ່ຜູ້ຖືກເຊີນເຂົ້າຮ່ວມໃນການດຳເນີນຄະດີ, ຄ່າເອກະສານ ແລະຄ່າສຳເນົາເອກະສານກ່ຽວກັບຄະດີນັ້ນ.

**ມາດຕາ 17(ໃໝ່). ອົງປະກອບຄ່າທຳນຽມສານທາງແພ່ງ**

ຄ່າທຳນຽມສານທາງແພ່ງ ປະກອບດ້ວຍ:

1. ອາກອນຂອງລັດ;
2. ຄ່າໃຊ້ຈ່າຍໃນການດຳເນີນຄະດີແພ່ງ;
3. ຄ່າໃຊ້ຈ່າຍໃຫ້ແກ່ຜູ້ຖືກເຊີນເຂົ້າຮ່ວມໃນການດຳເນີນຄະດີແພ່ງ;
4. ຄ່າເອກະສານ ແລະ ຄ່າສຳເນົາເອກະສານຕ່າງໆ.

**ມາດຕາ 18(ໃໝ່). ອັດຕາອາກອນຂອງລັດ**

ອັດຕາອາກອນຂອງລັດ ໃຫ້ປະຕິບັດດັ່ງນີ້:

1. ໃຫ້ເສັຍ ອາກອນຂອງລັດ ສອງສ່ວນຮ້ອຍ ຂອງມູນຄ່າການຮ້ອງຟ້ອງ;
2. ໃຫ້ເສັຍ 50.000 ກີບ ກ່ຽວກັບຄະດີສາຍຜົວເມັຍ;
3. ໃຫ້ເສັຍ 40.000 ກີບ ກ່ຽວກັບການຮ້ອງຟ້ອງເພື່ອຂໍຢ່າຮ້າງກັບບຸກຄົນທີ່ຖືກຮັບຮູ້ວ່າເປັນຜູ້ຫາຍສາບສູນ ຫຼື ບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ຫຼື ບຸກຄົນທີ່ຖືກສານຕັດສິນ ລົງໂທດ ຕັດອິດສະລະພາບແຕ່ ຫ້າ ປີ ຂຶ້ນໄປ;
4. ໃຫ້ເສັຍ 50.000 ກີບ ກ່ຽວກັບການຮ້ອງຟ້ອງເພື່ອຂໍປ່ຽນແປງ ຫຼື ຍົກເລີກສັນຍາເຊົ່າເຮືອນ, ການອາຍັດຊັບ ແລະ ການຮ້ອງຟ້ອງອື່ນໆ ທີ່ບໍ່ສາມາດຕີມູນຄ່າໄດ້.

**ມາດຕາ 19(ໃໝ່). ຄ່າໃຊ້ຈ່າຍໃນການດຳເນີນຄະດີແພ່ງ**

ຄ່າໃຊ້ຈ່າຍໃນການດຳເນີນຄະດີແພ່ງ ແມ່ນຄ່າໃຊ້ຈ່າຍເພື່ອລົງເກັບກຳຂໍ້ມູນ ຫຼື ຫຼັກຖານ, ພິສູດຫຼັກຖານ ແລະ ອື່ນໆ.

ຄູ່ຄວາມ ຫຼື ບຸກຄົນທີສາມ ທີ່ຮ້ອງຂໍໃຫ້ທຳການເກັບກຳຂໍ້ມູນ, ພິສູດຫຼັກຖານ ຫຼື ຮຽກເອົາພະຍານເຂົ້າມາໃຫ້ການເພື່ອຊອກຫາຂໍ້ເທັດຈິງໃນຄະດີໃຫ້ແຈ້ງຂາວນັ້ນ ຜູ້ຮ້ອງຂໍຕ້ອງນຳເອົາເງິນມາມອບໃຫ້ເພື່ອເປັນຄ່າໃຊ້ຈ່າຍ.

ໃນກໍລະນີ ທີ່ເຫັນວ່າ ມີຄວາມຈຳເປັນໃນການລົງເກັບກຳຂໍ້ມູນ, ພິສູດຫຼັກຖານ ຫຼື ຮຽກເອົາພະຍານ ຫຼື ບຸກຄົນໃດໜຶ່ງທີ່ກ່ຽວຂ້ອງໃນຄະດີ ມາໃຫ້ການນັ້ນ ແມ່ນໃຫ້ ໂຈດ ເປັນ ຜູ້ຈ່າຍກ່ອນ.

**ມາດຕາ 20(ໃໝ່). ຄ່າໃຊ້ຈ່າຍໃຫ້ແກ່ຜູ້ຖືກເຊີນເຂົ້າຮ່ວມໃນການດຳເນີນຄະດີແພ່ງ**

ຄ່າໃຊ້ຈ່າຍໃຫ້ແກ່ຜູ້ຖືກເຊີນເຂົ້າຮ່ວມໃນການດຳເນີນຄະດີແພ່ງ ແມ່ນໃຫ້ປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍສະບັບນີ້.

**ມາດຕາ 21(ໃໝ່). ອັດຕາຄ່າທຳນຽມເອກະສານ ແລະ ສຳເນົາເອກະສານຕ່າງໆທາງແພ່ງ**

ອັດຕາຄ່າທຳນຽມເອກະສານ ແລະ ສຳເນົາເອກະສານຕ່າງໆທາງແພ່ງ ໃຫ້ປະຕິບັດດັ່ງນີ້:

1. ຄ່າເສື້ອປົກສຳນວນຄະດີ ໃຫ້ເກັບ ຊຸດລະ 35.000 ກີບ;
2. ຄ່າແບບພິມຄຳຮ້ອງຟ້ອງ, ຄຳແກ້ຟ້ອງ, ຄຳຟ້ອງແຍ່ງ, ຄຳຮ້ອງຂໍອຸທອນ, ຄຳຮ້ອງຂໍລົບລ້າງ ແລະຄຳຮ້ອງຂໍຮື້ຟື້ນຄະດີ ໃຫ້ເກັບ ຊຸດລະ10.000 ກີບ;
3. ຄ່າອັດສຳເນົາເອກະສານຕ່າງໆ ໃຫ້ເກັບ ໜ້າລະ 500 ກີບ;
4. ຄ່າທຳນຽມຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ ໃຫ້ເກັບໜ້າລະ 2000 ກີບ.

ອັດຕາຄ່າທຳນຽມເອກະສານດັ່ງກ່າວ ສາມາດປັບປຸງແປງໄດ້ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ໂດຍການສະເໜີຂອງປະທານສານປະຊາຊົນສູງສຸດ.

**ມາດຕາ 22(ໃໝ່). ເງິນວາງສານ**

ສານຈະກຳນົດໃຫ້ຄູ່ຄວາມ ຫຼື ບຸກຄົນທີສາມໃນຄະດີແພ່ງ ວາງເງິນໄວ້ນຳສານ ບໍ່ໃຫ້ເກີນ 200.000 ກີບ ເພື່ອຄວາມສະດວກໃນການດຳເນີນຄະດີ.

ໃນກໍລະນີທີ່ເງິນນຳມາວາງສານນັ້ນ ຫາກເຫຼືອຈາກການໃຊ້ຈ່າຍແລ້ວ ກໍຕ້ອງສົ່ງຄືນໃຫ້ຜູ້ກ່ຽວ.

**ມາດຕາ 23(ໃໝ່). ການນຳໃຊ້ເງິນວາງສານ**

ເງິນວາງສານຈະຖືກນຳໃຊ້ໃນກໍລະນີດັ່ງນີ້:

1. ການສົ່ງໝາຍຮຽກ;
2. ການສົ່ງເອກະສານ ແລະ ສຳນວນຄະດີ;
3. ການໃຊ້ຈ່າຍອື່ນໆ ທີ່ເຫັນວ່າມີຄວາມຈຳເປັນໃນການດຳເນີນຄະດີແພ່ງ.

**ມາດຕາ 24(ໃໝ່). ຄ່າຂໍອຸທອນ, ຄ່າຂໍລົບລ້າງ ແລະ ຄ່າຂໍຮື້ຟື້ນຄະດີແພ່ງ**

ການຂໍອຸທອນ, ການຂໍລົບລ້າງ ແລະ ການຂໍຮື້ຟື້ນຄະດີແພ່ງ ໃຫ້ປະຕິບັດດັ່ງນີ້:

ຄ່າຂໍອຸທອນ ໃຫ້ເສັຍ 30.000 ກີບ;

ຄ່າຂໍລົບລ້າງ ໃຫ້ເສັຍ 40.000 ກີບ;

ຄ່າຂໍຮື້ຟື້ນຄະດີ ໃຫ້ເສັຍ 50.000 ກີບ.

ສຳລັບການຂໍອຸທອນ, ການຂໍລົບລ້າງ ແລະ ການຂໍຮື້ຟື້ນຄະດີກ່ຽວກັບຄະດີສາຍຜົວເມັຍ, ການຮ້ອງຟ້ອງເພື່ອຂໍຢ່າຮ້າງກັບບຸກຄົນທີ່ຖືກຮັບຮູ້ວ່າ ເປັນຜູ້ຫາຍສາບສູນ ຫຼື ບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ຫຼື ບຸກຄົນທີ່ຖືກສານຕັດສິນ ລົງໂທດຕັດອິດສະລະພາບແຕ່ ຫ້າ ປີ ຂຶ້ນໄປ, ການຮ້ອງ

ຟ້ອງເພື່ອຂໍປ່ຽນແປງ ຫຼື ຍົກເລີກສັນຍາເຊົ່າເຮືອນ, ການອາຍັດຊັບ ແລະ ການຮ້ອງຟ້ອງອື່ນໆທີ່ບໍ່ສາມາດຕີມູນຄ່າໄດ້ ໃຫ້ປະຕິບັດດັ່ງນີ້:

ຄ່າຂໍອຸທອນ ໃຫ້ເສຍ 10.000 ກີບ;

ຄ່າຂໍລົບລ້າງ ໃຫ້ເສຍ 20.000 ກີບ;

ຄ່າຂໍຮື້ຟື້ນຄະດີ ໃຫ້ເສຍ 30.000 ກີບ.

**ມາດຕາ 25(ໃໝ່). ການຍົກເວັ້ນອາກອນຂອງລັດ, ຄ່າຂໍອຸທອນ, ຄ່າຂໍລົບລ້າງ ແລະ ຄ່າຂໍຮື້ຟື້ນຄະດີແພ່ງ**

ການຮ້ອງຟ້ອງທາງແພ່ງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 4 ວັກທີ 2 ຂອງກົດໝາຍສະບັບນີ້ ຈະ ຖືກຍົກເວັ້ນຈາກການຈ່າຍອາກອນຂອງລັດ, ຄ່າຂໍອຸທອນ, ຄ່າຂໍລົບລ້າງ ແລະ ຄ່າຂໍຮື້ຟື້ນຄະດີ ແຕ່ສະເພາະ ຜູ້ຮ້ອງຟ້ອງທີ່ເສຍຄະດີເທົ່ານັ້ນ. ສຳລັບຜູ້ຖືກຮ້ອງຟ້ອງທີ່ເສຍຄະດີ ຈະບໍ່ໄດ້ຮັບການຍົກເວັ້ນ ແລະ ຕ້ອງໄດ້ປະຕິບັດຕາມ ມາດຕາ 18 ຂໍ້ 1 ແລະມາດຕາ 24 ວັກທີ 1 ຂອງກົດໝາຍສະບັບນີ້ ໃນກໍລະນີທີ່ຜູ້ກ່ຽວຫາກຮ້ອງຂໍອຸທອນ, ຂໍລົບລ້າງ ຫຼື ຂໍຮື້ຟື້ນຄະດີນັ້ນ.

**ມາດຕາ 26(ໃໝ່). ພັນທະໃນການໃຊ້ແທນຄ່າທຳນຽມສານທາງແພ່ງ**

ຝ່າຍທີ່ເສຍຄະດີຕ້ອງໃຊ້ແທນຄ່າໃຊ້ຈ່າຍຕ່າງໆ ໃນການດຳເນີນຄະດີໃຫ້ແກ່ຝ່າຍທີ່ຊະນະຄະດີ ແລະຈ່າຍອາກອນຂອງລັດ ຕາມຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ. ຖ້າວ່າການຮ້ອງຟ້ອງຫາກຖືກສານຕັດສິນໃຫ້ໂຈດໄດ້ສ່ວນໃດສ່ວນໜຶ່ງ ຈຳເລີຍຕ້ອງຈ່າຍອາກອນຂອງລັດຕາມສ່ວນທີ່ສານໄດ້ຕັດສິນໃຫ້ໂຈດນັ້ນ. ການຈ່າຍອາກອນຂອງລັດໃນສ່ວນທີ່ເຫຼືອນັ້ນ ໃຫ້ໂຈດເປັນຜູ້ຈ່າຍ.

ເມື່ອສານຫາກຕັດສິນຍົກເລີກຄຳຮ້ອງຟ້ອງທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ຂອງອົງການໄອຍະການປະຊາຊົນ, ອົງການບໍລິຫານລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມເພື່ອປົກປ້ອງສິດ ແລະຜົນປະໂຫຍດອັນຊອບທຳ ຂອງບຸກຄົນອື່ນແລ້ວ ຈຳເລີຍຈະໄດ້ຮັບການໃຊ້ແທນຄືນລາຍຈ່າຍ ຊຶ່ງຜູ້ກ່ຽວໄດ້ຈ່າຍໃນການດຳເນີນຄະດີ ໂດຍຄິດໄລ່ເອົາຈາກພາກສ່ວນທີ່ຮ້ອງຟ້ອງນັ້ນ.

**ມາດຕາ 27(ໃໝ່). ຜູ້ຮັບຜິດຊອບເກັບຄ່າທຳນຽມສານທາງແພ່ງ**

ພະນັກງານທີ່ເກັບຄ່າທຳນຽມສານ ເປັນຜູ້ຮັບຜິດຊອບເກັບຄ່າທຳນຽມສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10, 11 ແລະ 12 ຂອງ ກົດໝາຍສະບັບນີ້.

ພະນັກງານປະຕິບັດຄຳຕັດສິນຂອງສານ ເປັນຜູ້ຮັບຜິດຊອບເກັບອາກອນຂອງລັດ ແລະຈັດຕັ້ງປະຕິບັດກ່ຽວກັບຄ່າໃຊ້ຈ່າຍອື່ນໆ ຕາມຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ.

# ໝວດທີ IV
## ຄ່າທຳນຽມສານທາງອາຍາ

**ມາດຕາ 28(ໃໝ່). ຄ່າທຳນຽມສານທາງອາຍາ**

ຄ່າທຳນຽມສານທາງອາຍາ ແມ່ນຄ່າໃຊ້ຈ່າຍຂອງ ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານຂອງອົງການໄອຍະການປະຊາຊົນ ແລະສານປະຊາຊົນ ເຂົ້າໃນການດຳເນີນຄະດີອາຍາ ເຊັ່ນ: ການລົງຊັນນະສູດສະຖານທີ່ເກີດເຫດ, ການລົງເກັບກຳຂໍ້ມູນ, ການພິສູດຫຼັກຖານ, ການຊອກຫາຕົວຜູ້ຕ້ອງຫາ ຫຼື ຈຳເລີຍ ລວມທັງການໃຊ້ຈ່າຍໃຫ້ບຸກຄົນ ທີ່ໄດ້ກ່າວໄວ້ໃນ ມາດຕາ 11 ຂອງກົດໝາຍສະບັບນີ້.

**ມາດຕາ 29(ໃໝ່). ອົງປະກອບຄ່າທຳນຽມສານທາງອາຍາ**

ຄ່າທຳນຽມສານທາງອາຍາ ປະກອບດ້ວຍ:

1. ຄ່າໃຊ້ຈ່າຍໃນການດຳເນີນຄະດີອາຍາ;
2. ຄ່າໃຊ້ຈ່າຍໃຫ້ແກ່ຜູ້ຖືກເຊີນເຂົ້າຮ່ວມໃນການດຳເນີນຄະດີອາຍາ;
3. ຄ່າເອກະສານ ແລະ ຄ່າສຳເນົາເອກະສານຕ່າງໆ.

**ມາດຕາ 30(ໃໝ່). ຄ່າໃຊ້ຈ່າຍໃນການດຳເນີນຄະດີອາຍາ**

ຄ່າໃຊ້ຈ່າຍໃນການດຳເນີນຄະດີອາຍາ ແມ່ນຄ່າໃຊ້ຈ່າຍຂອງ ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານຂອງອົງການໄອຍະການປະຊາຊົນ ໃນການລົງຊັນນະສູດສະຖານທີ່ເກີດເຫດ, ການລົງເກັບກຳຂໍ້ມູນ, ການພິສູດຫຼັກຖານ, ການຊອກຫາຕົວຜູ້ຕ້ອງຫາ ຫຼື ຈຳເລີຍ ລວມທັງຄ່າໃຊ້ຈ່າຍຂອງສານ ໃນການສົ່ງໝາຍຮຽກ, ສົ່ງເອກະສານ, ສົ່ງສຳນວນຄະດີ ແລະການໃຊ້ຈ່າຍໃຫ້ບຸກຄົນທີ່ໄດ້ກ່າວໄວ້ໃນ ມາດຕາ 11 ຂອງກົດໝາຍສະບັບນີ້.

**ມາດຕາ 31(ໃໝ່). ຄ່າໃຊ້ຈ່າຍໃຫ້ແກ່ຜູ້ຖືກເຊີນເຂົ້າຮ່ວມໃນການດຳເນີນຄະດີອາຍາ**

ຄ່າໃຊ້ຈ່າຍໃຫ້ແກ່ຜູ້ຖືກເຊີນເຂົ້າຮ່ວມໃນການດຳເນີນຄະດີອາຍາ ແມ່ນໃຫ້ປະຕິບັດຕາມ ທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງ ກົດໝາຍສະບັບນີ້.

**ມາດຕາ 32(ໃໝ່). ອັດຕາຄ່າທຳນຽມເອກະສານ ແລະ ສຳເນົາເອກະສານຕ່າງໆທາງອາຍາ**

ອັດຕາຄ່າທຳນຽມເອກະສານ ແລະສຳເນົາເອກະສານຕ່າງໆ ທາງອາຍາ ແມ່ນໃຫ້ປະຕິບັດດັ່ງດຽວກັນກັບອັດຕາຄ່າທຳນຽມເອກະສານ ແລະສຳເນົາເອກະສານຕ່າງໆທາງແພ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 21 ຂອງກົດໝາຍສະບັບນີ້.

**ມາດຕາ 33(ໃໝ່). ຄວາມຮັບຜິດຊອບຕໍ່ຄ່າທຳນຽມສານທາງອາຍາ**

ຄ່າໃຊ້ຈ່າຍໃນການດຳເນີນຄະດີອາຍາ, ຄ່າໃຊ້ຈ່າຍ ໃຫ້ແກ່ຜູ້ຖືກເຊີນເຂົ້າຮ່ວມໃນການດຳເນີນຄະດີອາຍາ, ຄ່າເອກະສານ ແລະຄ່າສຳເນົາເອກະສານຕ່າງໆ ແມ່ນໃຫ້ລັດເປັນຜູ້ຈ່າຍກ່ອນ. ຖ້າສານຫາກ

ຕັດສິນໃຫ້ຈຳເລີຍມີຄວາມຜິດທາງອາຍາ ແມ່ນໃຫ້ຈຳເລີຍເປັນຜູ້ໃຊ້ແທນຄ່າທຳນຽມສານ ທີ່ລັດໄດ້ຈ່າຍໄປກ່ອນແລ້ວນັ້ນຄືນໃຫ້ແກ່ລັດ. ໃນກໍລະນີທີ່ມີຜູ້ກະທຳຜິດຫຼາຍຄົນ ກໍໃຫ້ແບ່ງກັນເສັຍຕາມຄວາມຮັບຜິດຊອບຂອງແຕ່ລະຄົນ.

ໃນກໍລະນີທີ່ມີການຕັດສິນໃຫ້ ຈຳເລີຍພົ້ນຈາກຂໍ້ກ່າວຫາ ຫຼື ຕັດສິນລົງໂທດຜູ້ກະທຳຜິດ ຊຶ່ງຢູ່ໃນສະພາບທີ່ບໍ່ສາມາດຈະຈ່າຍຄ່າທຳນຽມສານໄດ້ນັ້ນ ແມ່ນໃຫ້ລັດເປັນຜູ້ຮັບຜິດຊອບ.

ໃນກໍລະນີ ທີ່ມີການຍົກເລີກຄະດີ ເນື່ອງຈາກມີການຕົກລົງກັນລະຫວ່າງ ຜູ້ຖືກເສັຍຫາຍກັບ ຜູ້ຖືກຫາໃນຄະດີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25 ຂອງກົດໝາຍອາຍາ ສະບັບປັບປຸງ ແມ່ນໃຫ້ຜູ້ຖືກເສັຍຫາຍ ແລະ ຜູ້ຖືກຫາ ເປັນຜູ້ເສັຍຄ່າໃຊ້ຈ່າຍໃນການດຳເນີນຄະດີນັ້ນ.

**ມາດຕາ 34(ໃໝ່). ຄ່າຂໍອຸທອນ, ຄ່າຂໍລົບລ້າງ ແລະ ຄ່າຂໍຮື້ຟື້ນຄະດີອາຍາ**

ຄ່າຂໍອຸທອນ, ຄ່າຂໍລົບລ້າງ ແລະຄ່າຂໍຮື້ຟື້ນຄະດີອາຍາ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ວັກ 1 ຂອງກົດໝາຍສະບັບນີ້ ຍົກເວັ້ນການສະເໜີຄັດຄ້ານຂອງໄອຍະການປະຊາຊົນ.

## ໝວດທີ V

## ການຄຸ້ມຄອງ ແລະ ກວດກາ ຄ່າທຳນຽມສານ

**ມາດຕາ 35(ໃໝ່). ອົງການຄຸ້ມຄອງຄ່າທຳນຽມສານ**

ອົງການຄຸ້ມຄອງຄ່າທຳນຽມສານ ປະກອບດ້ວຍ ອົງການຄຸ້ມຄອງກ່ຽວກັບອາກອນຂອງລັດ ແລະ ອົງການຄຸ້ມຄອງກ່ຽວກັບຄ່າໃຊ້ຈ່າຍ ໃນການດຳເນີນຄະດີ ແລະ ອື່ນໆ.

ອົງການຄຸ້ມຄອງຄ່າທຳນຽມສານ ກ່ຽວກັບອາກອນຂອງລັດ ປະກອບດ້ວຍ:

1. ກະຊວງຍຸຕິທຳ;
2. ພະແນກຍຸຕິທຳແຂວງ, ນະຄອນ;
3. ຫ້ອງການຍຸຕິທຳເມືອງ, ເທດສະບານ.

ອົງການຄຸ້ມຄອງຄ່າທຳນຽມສານ ກ່ຽວກັບຄ່າໃຊ້ຈ່າຍໃນການດຳເນີນຄະດີ ແລະອື່ນໆປະກອບດ້ວຍ :

1. ສານປະຊາຊົນສູງສຸດ;
2. ສານອຸທອນ;
3. ສານປະຊາຊົນແຂວງ, ນະຄອນ;
4. ສານປະຊາຊົນເມືອງ, ເທດສະບານ.

ໃນກໍລະນີທີ່ສຳນວນຄະດີ ຫາກຢູ່ໃນຄວາມຮັບຜິດຊອບຂອງອົງການໄອຍະການປະຊາຊົນນັ້ນ ກໍໃຫ້ອົງການດັ່ງກ່າວເປັນຜູ້ຄຸ້ມຄອງຄ່າທຳນຽມສານກ່ຽວກັບຄະດີນັ້ນ.

**ມາດຕາ 36(ໃໝ່). ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງຄ່າທຳນຽມສານຂັ້ນສູນກາງ**

ໃນການຄຸ້ມຄອງຄ່າທຳນຽມສານນັ້ນ ອົງການຄຸ້ມຄອງຄ່າທຳນຽມສານຂັ້ນສູນກາງ ຊຶ່ງມີກະຊວງຍຸຕິທຳ ແລະສານປະຊາຊົນສູງສຸດ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າສ້າງແຜນການ, ລະບຽບການ, ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະແຈ້ງການກ່ຽວກັບວຽກງານຄ່າທຳນຽມສານ;
2. ຊີ້ນຳ ແລະ ຄຸ້ມຄອງວຽກງານການຈັດຕັ້ງປະຕິບັດຄ່າທຳນຽມສານ;
3. ສ້າງ, ບຳລຸງ ແລະຍົກລະດັບຄວາມຮູ້ຄວາມສາມາດ, ຄຸນສົມບັດ, ຈັນຍາທຳ ແລະແບບແຜນວິທີເຮັດວຽກໃຫ້ແກ່ພະນັກງານທີ່ກ່ຽວຂ້ອງ;
4. ປະຕິບັດນະໂຍບາຍຍ້ອງຍໍຕໍ່ພະນັກງານຜູ້ທີ່ມີຜົນງານ ແລະ ປະຕິບັດວິໄນ ຕໍ່ຜູ້ທີ່ມີຄວາມຜິດ ໃນການປະຕິບັດວຽກງານຄ່າທຳນຽມສານ;
5. ປະຕິບັດສິດ ແລະໜ້າທີ່ອື່ນໆ ກ່ຽວກັບວຽກງານຄ່າທຳນຽມສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 37(ໃໝ່). ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງຄ່າທຳນຽມສານຂັ້ນທ້ອງຖິ່ນ**

ໃນການຄຸ້ມຄອງຄ່າທຳນຽມສານນັ້ນ ອົງການຄຸ້ມຄອງຄ່າທຳນຽມສານຂັ້ນທ້ອງຖິ່ນ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄຸ້ມຄອງທາງດ້ານການຈັດຕັ້ງ, ງົບປະມານ ແລະກວດກາການຈັດຕັ້ງປະຕິບັດວຽກງານ ຄ່າທຳນຽມສານ ຂອງພາກສ່ວນທີ່ຂຶ້ນກັບຕົນ;
2. ສະເໜີຕໍ່ຂັ້ນເທິງຂອງຕົນ ກ່ຽວກັບການປັບປຸງແກ້ໄຂວຽກງານຄ່າທຳນຽມສານ;
3. ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານຄ່າທຳນຽມສານຕໍ່ຂັ້ນເທິງຂອງຕົນ ຢ່າງເປັນລະບົບ;
4. ປະຕິບັດສິດ ແລະໜ້າທີ່ອື່ນໆ ກ່ຽວກັບວຽກງານຄ່າທຳນຽມສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 38(ໃໝ່). ອົງການກວດກາຄ່າທຳນຽມສານ**

ອົງການກວດກາຄ່າທຳນຽມສານປະກອບດ້ວຍ ອົງການກວດກາພາຍໃນ ແລະອົງການກວດກາພາຍນອກ.

ອົງການກວດກາພາຍໃນແມ່ນອົງການດຽວກັນກັບອົງການຄຸ້ມຄອງຄ່າທຳນຽມສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 35 ຂອງກົດໝາຍສະບັບນີ້.

ອົງການກວດກາພາຍນອກ ມີ ກະຊວງການເງິນ, ພະແນກການເງິນແຂວງ, ນະຄອນ ແລະຫ້ອງການການເງິນເມືອງ, ເທດສະບານ.

**ມາດຕາ 39(ໃໝ່). ສິດ ແລະ ໜ້າທີ່ຂອງອົງການກວດກາພາຍໃນ**

ອົງການກວດກາພາຍໃນ ມີສິດ ແລະໜ້າທີ່ ກວດກາການຈັດຕັ້ງປະຕິບັດວຽກງານຄ່າທຳນຽມສານ, ການປະຕິບັດໜ້າທີ່ ແລະຄວາມຮັບຜິດຊອບຂອງພະນັກງານແຕ່ລະຂັ້ນທີ່ຂຶ້ນກັບຕົນ ເປັນຕົ້ນແມ່ນການຄິດໄລ່ ແລະການເກັບຄ່າທຳນຽມສານ ລວມທັງພັນທະອື່ນໆ ໃຫ້ຖືກຕ້ອງ, ຄົບຖ້ວນຕາມຕົວຈິງ ແລະ ລະບຽບກົດໝາຍ.

**ມາດຕາ 40(ໃໝ່). ສິດ ແລະ ໜ້າທີ່ຂອງອົງການກວດກາພາຍນອກ**

ອົງການກວດກາພາຍນອກ ມີສິດ ແລະໜ້າທີ່ ກວດກາການຈັດຕັ້ງປະຕິບັດສິດ ແລະໜ້າທີ່ຂອງພະນັກງານທີ່ກ່ຽວຂ້ອງກັບວຽກງານຄ່າທຳນຽມສານ ຢູ່ໃນຂັ້ນຂອງຕົນ ເພື່ອເຮັດໃຫ້ການເກັບຄ່າທຳນຽມສານມີປະສິດທິພາບ, ມີຄວາມໂປ່ງໃສ ແລະ ຍຸຕິທຳ.

## ໝວດທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

**ມາດຕາ 41(ໃໝ່). ນະໂຍບາຍຕໍ່ຜູ້ມີຜົນງານ**

ພະນັກງານທີ່ກ່ຽວຂ້ອງກັບການປະຕິບັດວຽກງານຄ່າທຳນຽມສານ ທີ່ໄດ້ເຮັດສຳເລັດໜ້າທີ່ຂອງຕົນເປັນຢ່າງດີ ແລະອົງການຈັດຕັ້ງ ຫຼື ບຸກຄົນ ທີ່ໄດ້ໃຫ້ການຮ່ວມມື ແລະປະກອບສ່ວນເຂົ້າໃນວຽກງານຄ່າທຳນຽມສານ ທີ່ມີຜົນງານດີເດັ່ນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມລະບຽບການ.

**ມາດຕາ 42(ໃໝ່). ມາດຕະການຕໍ່ຜູ້ລະເມີດ**

ພະນັກງານທີ່ກ່ຽວຂ້ອງກັບວຽກງານຄ່າທຳນຽມສານ ທີ່ມີຄວາມຜິດໃນການປະຕິບັດໜ້າທີ່ຂອງຕົນເຊັ່ນ ຂາດຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ວຽກງານ, ເຂົ້າຂ້າງອອກຂາ, ເກັບຄ່າທຳນຽມສານ ຫຼື ນຳໃຊ້ຄ່າທຳນຽມສານ ບໍ່ຖືກຕ້ອງຕາມກົດໝາຍໂດຍເຈດຕະນາ ຈະຖືກສຶກສາອົບຮົມ ຫຼື ປະຕິບັດວິໄນ.

ໃນກໍລະນີທີ່ພະນັກງານດັ່ງກ່າວຫາກສວຍໃຊ້ໜ້າທີ່ ຫຼື ໃຊ້ສິດອຳນາດເກີນຂອບເຂດ ຫຼື ທວງເອົາເງິນຄ່າທຳນຽມສານໂດຍບໍ່ຖືກຕ້ອງ, ສໍ້ໂກງ ຫຼື ຍັກຍອກ ເອົາເງິນຄ່າທຳນຽມສານ, ເຮັດໃຫ້ເງິນຄ່າທຳນຽມສານເສັຍຫາຍ ດ້ວຍຄວາມບໍ່ລະມັດລະວັງ ກໍຈະຖືກດຳເນີນຄະດີອາຍາຕາມກົດໝາຍ.

ຄູ່ຄວາມທີ່ສານຕັດສິນໃຫ້ເສັຍຄ່າທຳນຽມສານ ແຕ່ບໍ່ປະຕິບັດຕາມຄຳຕັດສິນຂອງສານ ໂດຍບໍ່ມີເຫດຜົນ ຖືວ່າເປັນການກະທຳຜິດ ແລະ ຈະຖືກດຳເນີນຄະດີອາຍາຕາມກົດໝາຍ.

# ໝວດທີ VII
# ບົດບັນຍັດສຸດທ້າຍ

**ມາດຕາ 43(ໃໝ່). ການຈັດຕັ້ງປະຕິບັດ**

ກະຊວງຍຸຕິທຳ, ສານປະຊາຊົນສູງສຸດ ແລະອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 44(ໃໝ່). ຜົນສັກສິດ**

ກົດໝາຍສະບັບນີ້ມີຜົນສັກສິດ ນັບແຕ່ວັນປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ກົດໝາຍສະບັບນີ້ປ່ຽນແທນກົດໝາຍວ່າດ້ວຍຄ່າທຳນຽມສານ ສະບັບເລກທີ 05/90/ສປສ ລົງວັນທີ 10 ກໍລະກົດ 1990.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ທອງສິງ ທຳມະວົງ